ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາປະຊາຊົນແຂວງໄຊຍະບູລີ

ເລກທີ .09../ສພຂ.ຊຍ
ໄຊຍະບູລີ, ວັນທີ .13.ເມສາ 2026

# ມະຕິ
## ກອງປະຊຸມສະພາປະຊາຊົນແຂວງ
## ວ່າດ້ວຍການເລືອກຕັ້ງປະທານສະພາປະຊາຊົນແຂວງ

- ອີງຕາມ ມາດຕາ 78 ຂໍ້ທີ 3 ຂອງລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ 2025).
- ອີງຕາມ ມາດຕາ 53 ຂໍ້ທີ 2 ຂອງກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບປັບປຸງ ປີ 2024.
- ອີງຕາມ ໜັງສືສະເໜີຂອງ ຄະນະປະຈຳສະພາປະຊາຊົນແຂວງ ຊຸດທີ IV ກ່ຽວກັບມາດຕະຖານຂອງ ປະທານສະພາປະຊາຊົນແຂວງ ແລະ ເປົ້າໝາຍຈະເລືອກຕັ້ງປະທານສະພາປະຊາຊົນແຂວງ ຊຸດທີ V ລົງ ວັນທີ 9 ເມສາ 2026.

ຜ່ານການຄົ້ນຄວ້າພິຈາລະນາ, ປະກອບຄຳເຫັນຢ່າງເລິກເຊິ່ງຖີ່ຖ້ວນ ຂອງບັນດາທ່ານສະມາຊິກສະພາປະຊາຊົນແຂວງ ຕໍ່ການສະເໜີຂອງຄະນະປະຈຳສະພາປະຊາຊົນແຂວງ ຢູ່ໃນກອງປະຊຸມຄັ້ງປະຖົມມະລຶກ ຂອງສະພາປະຊາຊົນແຂວງ ຊຸດທີ V ໃນວາລະຕອນເຊົ້າ ຂອງວັນທີ 9 ເມສາ 2026.

## ກອງປະຊຸມຕົກລົງ:

ມາດຕາ 1 ເລືອກຕັ້ງ ທ່ານ ເພັງນີລັນ ຄຳພັນເພັງ ກຳມະການສູນກາງພັກ, ເລຂາຄະນະບໍລິຫານງານພັກແຂວງ ເປັນ ປະທານສະພາປະຊາຊົນແຂວງ, ທັງເປັນ ປະທານຄະນະປະຈຳສະພາປະຊາຊົນແຂວງ ຊຸດທີ V.

ມາດຕາ 2 ອົງການຈັດຕັ້ງພັກ-ລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນ, ທ່ານທີ່ຖືກເລືອກຕັ້ງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດມະຕິສະບັບນີ້ ຢ່າງເຂັ້ມງວດ.

ມາດຕາ 3 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ປະທານສະພາປະຊາຊົນແຂວງ

ເພັງນີລັນ ຄຳພັນເພັງ

สแกนด้วย CamScanner